ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ພິທີເປີດບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ



ໃນຕອນແລງຂອງວັນທີ 29 ສິງຫາ 2023 ທີ່ ໂຮງແຮມ ລາວ ພລາຊ່າ, ນະຄອນຫຼວງວຽງຈັນ. ໄດ້ຈັດພິທີເປີດໂຕ ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ ຂຶ້ນ, ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທ່ານ ພູທະນູເຜັດ ໄຊສົມບັດ ຮອງລັດຖະມົນຕີກະຊວງການເງິນ, ພ້ອມດ້ວຍ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ພາຍໃນພິທີ, ທ່ານ ນາງ ຄຳຫຼ້າ ເຮືອນມະນີວົງ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທຫລ ໄດ້ຂຶ້ນລາຍງານສະພາບ ກ່ຽວກັບການກະກຽມຫັນສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ມາເປັນນິຕິບຸກຄົນ ກໍ່ຄືຫັນເປັນ ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ ແລະ ທິດທາງຂອງກົມຄຸ້ມຄອງທະນາຄານທຸລະກິດ ກໍຄື ທະນາຄານແຫ່ງ ສປປ ລາວ ໃນການຄຸ້ມຄອງບໍລິສັດດັ່ງກ່າວ ໃນຕໍ່ໜ້າ ໂດຍສັງເຂບ. ຊຶ່ງໃນການກະກຽມຫັນສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ມາເປັນນິຕິບຸກຄົນແມ່ນ ທະນາຄານແຫ່ງ ສປປ ລາວ ໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອຄົ້ນຄວ້າສ້າງບົດວິພາກເສດຖະກິດ-ເຕັກນິກໃນການສ້າງຕັ້ງບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ ພ້ອມທັງສ້າງນິຕິກຳເພື່ອຮອງຮັບການເຄື່ອນໄຫວວຽກງານຂອງບໍລິສັດດັ່ງກ່າວ. ໂດຍໄດ້ມີການສຶກສາຄົ້ນຄວ້າອີງຕາມ ບົດຮຽນສາກົນ ແລະ ພາກພື້ນ ໂດຍສະເພາະບົດຮຽນຂອງປະເທດ ສສ. ຫວຽດນາມ ແລະ ປະເທດໄທ ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງໄດ້ ສ້າງຕັ້ງເປັນລັດວິສາຫະກິດ ເພື່ອເປັນການບໍລິຫານໜີ້ເສຍ ແລະ ຊັບສິນລໍຖ້າຂາຍຂອງສະຖາບັນການເງິນ. ເນື່ອງຈາກວຽກງານບໍລິຫານໜີ້ ແລະ ຊັບສິນແມ່ນມີຄວາມສຳຄັນຕ້ອງໄດ້ຍົກສູງພາລະບົດບາດໃຫ້ມີຄວາມພົ້ນເດັ່ນ. ການສ້າງຕັ້ງບໍລິສັດດັ່ງກ່າວຂຶ້ນມາແມ່ນຈະເຮັດໃຫ້

ທະນາຄານທຸລະກິດ ແລະ ສະຖາບັນການເງິນໄດ້ຮັບການຊ່ວຍເຫຼືອໃນການແກ້ໄຂໜີ້ບໍ່ເກີດດອກອອກຜົນ ແລະ ຊັບສິນລໍຖ້າຂາຍ, ມີບ່ອນແກ້ໄຂໜີ້ສະເພາະ, ພ້ອມທັງເຮັດໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນມີສະພາບຄ່ອງດີຂຶ້ນເມື່ອມີການຂາຍຊັບສິນ ແລະ ໜີ້ເສຍອອກໃຫ້ບໍລິສັດດັ່ງກ່າວ. ພ້ອມນີ້, ເມື່ອໄດ້ປ່ຽນເຈົ້າໜີ້ຈາກທະນາຄານທຸລະກິດມາຢູ່ກັບບໍລິສັດດັ່ງກ່າວ ສັງຄົມ ແລະ ລູກໜີ້ກໍຈະໄດ້ຮັບນະໂຍບາຍຕ່າງໆຢ່າງສົມເຫດສົມຜົນ ເປັນຕົ້ນແມ່ນ ການຍືດເວລາຊໍາລະໜີ້, ການປັບປຸງໂຄງສ້າງໜີ້, ນະໂຍບາຍປັບຫຼຸດອັດຕາດອກເບ້ຍປົກກະຕິ ແລະ ປັບໄໝ ຫຼື ຫຼຸດມູນຄ່າໜີ້ສ່ວນໃດສ່ວນໜຶ່ງ ແລະ ນະໂຍບາຍດ້ານອື່ນໆ ຊຶ່ງຈະສາມາດຟື້ນຟູທຸລະກິດຂອງລູກໜີ້ໃຫ້ສາມາດກັບຄືນມາເຄື່ອນໄຫວໄດ້ປົກກະຕິ, ສ້າງວຽກເຮັດງານທໍາ ແລະ ສ້າງລາຍຮັບໃຫ້ແກ່ຊຸມຊົນ, ຊ່ວຍຊຸກຍູ້ການຜະລິດພາຍໃນ, ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດຂອງ ສປປ ລາວ.




ເນື່ອງຈາກເຫັນໄດ້ຄວາມສໍາຄັນ ແລະ ຄວາມຈໍາເປັນໃນການສ້າງຕັ້ງບໍລິສັດດັ່ງກ່າວ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີຈຶ່ງໄດ້ມີແຈ້ງການ ສະບັບເລກທີ 173/ຫສນຍ, ລົງວັນທີ 08 ກຸມພາ 2023 ແລະ ກະຊວງການເງິນໄດ້ອອກຂໍ້ຕົກລົງອະນຸມັດໃຫ້ສ້າງຕັ້ງບໍລິສັດດັ່ງກ່າວ ຕາມຂໍ້ຕົກລົງເລກທີ 1936/ກງ, ລົງວັນທີ 30 ມິຖຸນາ 2023 ແລະ ໄດ້ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍເພື່ອສ້າງຕັ້ງເປັນ ບໍລິສັດລັດບໍລິຫານໜີ້ ແລະ ຊັບສິນຈໍາກັດຜູ້ດຽວ ຊຶ່ງເປັນວິສາຫະກິດຂອງລັດ, ໃນຮູບແບບສະຖາບັນການເງິນ, ມີທຶນຈົດທະບຽນ 300.000.000.000 (ສາມຮ້ອຍຕື້ກີບ) ແລະ ເຄື່ອນໄຫວດໍາເນີນທຸລະກິດບໍລິຫານໜີ້ ແລະ ຊັບສິນ ພາຍໃຕ້ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ. ໂດຍກົມຄຸ້ມຄອງທະນາຄານທຸລະກິດ, ທຫລ ຈະໄດ້ເປັນຜູ້ຕິດຕາມ ແລະ ກວດກາການເຄື່ອນໄຫວ ຕາມລະບຽບການທີ່ໄດ້ກໍານົດໄວ້ ໂດຍສະເພາະຕາມຂໍ້ຕົກລົງວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ ສະບັບເລກທີ 323/ທຫລ, ລົງວັນທີ 07/04/2023 ພ້ອມນີ້, ກໍຈະໄດ້ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາຈໍານວນໜຶ່ງ ເພື່ອນໍາໃຊ້ໃນການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດດັ່ງກ່າວ ເພື່ອຮັບປະກັນການເຄື່ອນໄຫວຂອງບໍລິສັດໃຫ້ມີປະສິດທິຜົນສູງ ສາມາດຊ່ວຍແກ້ໄຂບັນຫາຂາດສະພາບຄ່ອງ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບັນດາສະຖາບັນການເງິນ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ທ່ານຜູ້ວ່າການ ທຫລ ແລະ ທ່ານຮອງລັດຖະມົນຕີກະຊວງການເງິນ ໄດ້ໃຫ້ກຽດຂຶ້ນໂອ້ລົມມີຄໍາເຫັນ ເພື່ອເປັນແນວທາງໃນການດໍາເນີນເຄື່ອນໄຫວທຸລະກິດຂອງບໍລິສັດດັ່ງກ່າວ ແລະ ຕາງໜ້າໃຫ້ບໍລິສັດ ໂດຍທ່ານ ນາງ ທິບພະວັນ ຈັນທະຜາສຸກ ຜູ້ອໍານວຍການບໍລິສັດ ໄດ້ຂຶ້ນຮັບຄໍາເຫັນ ເຮັດໃຫ້ພິທີໃນຄັ້ງນີ້ເຕັມໄປດ້ວຍຄວາມໝາຍຄວາມສໍາຄັນ.

**# ຂ່າວ: ວັນປະເສີດ ສົມບູນຂັນ**

**# ພາບ: ສອນໄຊ ສີຫາເທບ**

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງກັນນໍາໃຊ້ເງິນກີບ